ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມລ້ຽງສັດ ແລະ ການປະມົງ

ເລກທີ: 0641 / ກລປ

ນະຄອນຫຼວງວຽງຈັນ, ວັນທີ 03 APR 2017

# ແຈ້ງການ

ເຖິງ: ຫົວໜ້າຂະແໜງລ້ຽງສັດ ແລະ ການປະມົງແຂວງ, ນະຄອນຫລວງ

ເລື່ອງ: ການຕິດຕາມ, ກວດກາ ແລະ ສະກັດກັ້ນການນຳເຂົ້າລູກໝູ, ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ເຂົ້າ ສປປ ລາວ ແລະ ການຫ້າມຄ້າຂາຍ ແລະ ບໍລິໂພກຜະລິດຕະພັນສັດທີ່ເປັນພະຍາດ

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 02 /ສພຊ, ລົງວັນທີ 11/11/ 2016.
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີເລກີ 158/ຫສນຍ.ກລຊ ລົງວັນທີ 31/01/2017 ເລື່ອງ: ການສະເໜີຂໍໃຫ້ສະກັດກັ້ນການນຳເຂົ້າລູກໝູ, ໝູຊີ້ນ ແລະ ຊີ້ນໝູ ຈາກປະເທດ ເພື່ອນບ້ານ.
- ອີງຕາມທາງສຽງຂອງສັງຄົມ ໃນການລະເມີດລະບຽບກົດໝາຍ ຂອງຜູ້ປະກອບການ ແລະ ແມ່ຄ້າບາງຈຳນວນທີ່ມີການລັກລອບຊື້-ຂາຍສັດເຫງົາ ຫຼື ຕາຍຍ້ອນເປັນພະຍາດ;

ດັ່ງທີ່ ພວກເຮົາ ຮັບຊາບນຳກັນວ່າ ໃນຊຸມປີຜ່ານມາ ການລ້ຽງໝູ ແບບເປັນຟາມໄດ້ມີການຂະຫຍາຍໂຕດີພໍສົມຄວນ ໂດຍສະເພາະແມ່ນ ການລ້ຽງແບບເປັນຟາມຂະໜາດໃຫຍ່ ເພື່ອເປັນສິນຄ້າຢູ່ຕາມຊານເມືອງໃຫຍ່ເພີ່ມຂຶ້ນ ຊຶ່ງໄດ້ເຮັດໃຫ້ ສປປ ລາວ ຈະສາມາດສະໜອງລູກໝູ, ໝູຊີ້ນ ແລະ ຊີ້ນໝູ ຕໍ່ຄວາມຕ້ອງການຢູ່ພາຍໃນໄດ້ຢ່າງພຽງພໍເປັນລຳດັບ.

ເຖິງຢ່າງໃດກໍ່ຕາມ ການລ້ຽງໝູ ຂອງປະເທດເຮົາກໍຍັງມີຂໍ້ຈຳກັດບາງດ້ານ ໂດຍສະເພາະແມ່ນ ການປ້ອງກັນ ແລະ ຄວບຄຸມພະຍາດລະບາດ, ການວາງແຜນການຜະລິດ, ການດຸນດ່ຽງການສະໜອງ ແລະ ຄວາມຕ້ອງການ ຍັງບໍ່ທັນໜັກແໜ້ນເຂັ້ມແຂງເທົ່າທີ່ຄວນ, ນອກຈາກນັ້ນ ກໍຍັງມີຜູ້ປະກອບການຈຳນວນໜຶ່ງຍັງບໍ່ທັນໄດ້ເອົາໃຈໃສ່, ບໍ່ຈິງໃຈໃນການປະຕິບັດລະບຽບກົດໝາຍ, ຂາດຈັນຍາບັນວິຊາຊີບ ລັກລອບນຳເອົາຊາກສັດທີ່ຕາຍຍ້ອນພະຍາດ ໄປຈຳໜ່າຍ ແລະ ບໍລິໂພກຢ່າງຊະຊາຍ ເຊິ່ງໄດ້ເຮັດໃຫ້ເກີດມີສ່ຽງໃນການເກີດການລະບາດຂອງພະຍາດຊະນິດໃໝ່ເກີດຂຶ້ນ ລວມທັງ ເກີດກະແສທາງສຽງທາງລົບພາຍໃນສັງຄົມເກີດຂຶ້ນ ຊຶ່ງທັງໝົດນີ້ ມັນໄດ້ສົ່ງຜົນກະທົບທາງລົບໂດຍກົງຕໍ່ການລ້ຽງໝູຂອງປະເທດເຮົາ.

ອີກຢ່າງໜຶ່ງ ໃນທີ່ຜ່ານມາ, ກ່ຽວກັບການຄຸ້ມຄອງການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ລູກໝູ, ໝູຊີ້ນ, ຊີ້ນໝູ ແລະ ຜະລິດຕະພັນສັດ ເຂົ້າ-ອອກ ປະເທດ ກໍຍັງບໍ່ທັນເປັນເອກະພາບ ຍັງມີລະບຸຍາດ ທັງຖືກຕ້ອງ ແລະ ບໍ່ຖືກຕ້ອງ ຕາມດ່ານຕ່າງໆ ທີ່ຂາດການກວດກາຕິດຕາມຢ່າງຮັດກຸມ ຈຶ່ງເປັນຊ່ອງຫວ່າງໃຫ້ແກ່ຜູ້ປະກອບການບາງກຸ່ມ ສວຍໃຊ້ ແລະ ສ້າງເງື່ອນໄຂ ຫຼື ຂໍ້ອ້າງຕ່າງໆ ເພື່ອໃຫ້ໄດ້ນຳເຂົ້າ ແນໃສ່ຫວັງຜົນກຳໄລໃຫ້ແກ່ຕົນເອງ ໂດຍບໍ່ໄດ້ຄຳນຶງເຖິງລະບຽບ ແລະ ຄວາມສ່ຽງຕ່າງໆ ທີ່ຈະກໍ່ໃຫ້ເກີດຜົນກະທົບທາງລົບຕໍ່ ຄວາມໝັ້ນຄົງ, ເສດຖະກິດ ແລະ ສັງຄົມຂອງຊາດ;

ດັ່ງນັ້ນ, ເພື່ອຮັບປະກັນ ບໍ່ໃຫ້ເກີດຜົນກະທົບ ຕໍ່ຊີວິດ, ສຸຂະພາບຂອງຜູ້ບໍລິໂພກ ແລະ ເປັນການເພີ່ມທະວີ ຄວາມເອົາໃຈໃສ່ ໃນການຄຸ້ມຄອງ, ດູແລ ການລ້ຽງ ແລະ ສະໜອງຊີ້ນໝູ ຢ່າງພຽງພໍ, ປອດໄພ ແລະ ສ້າງຄວາມໝັ້ນຄົງໃຫ້ແກ່ການຜະລິດ ແລະ ສະໜອງຊີ້ນໝູຂອງປະເທດໃຫ້ເກີດມີຄວາມໝັ້ນທ່ຽງ ແລະ ຍືນຍົງນັ້ນ

ຫົວໜ້າກົມລ້ຽງສັດ ແລະ ການປະມົງອອກແຈ້ງການດັ່ງນີ້:

1) ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫລວງ ເປັນເຈົ້າການ ປະສານສົມທົບກັບຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນຂອງຕົນ ລົງຕິດຕາມ, ກວດກາ ແລະ ສະກັດກັ້ນ ການນຳເຂົ້າລູກໝູ, ໝູຊີ້ນ ແລະ ຊີ້ນໝູ (ສົດ ແລະ ແຊ່ແຂງ) ລວມທັງຊີ້ນສ່ວນສັດ ຂອງບຸກຄົນ ຫຼື ນິຕິບຸກຄົນ ທີ່ນຳເຂົ້າບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຖ້າພົບເຫັນໃຫ້ປະຕິບັດມາດຕະການ ຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

2) ການນຳເຂົ້າສັດ, ຜະລິດຕະພັນສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດມາຈຳໜ່າຍໃນ ສປປ ລາວ ຕ້ອງມີເອກະສານຕົ້ນຕໍດັ່ງນີ້:
- ມີໃບອະນຸຍາດນຳເຂົ້າ ທີ່ອອກໂດຍ ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຂອງ ສປປ ລາວ;
- ມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນ ສຸຂານາໄມຜະລິດຕະພັນສິນຄ້າກ່ຽວກັບສັດ ທີ່ອອກໂດຍອົງການ ຫຼື ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງຂອງປະເທດຕົ້ນທາງ ທີ່ຖືກຕ້ອງຕາມເງື່ອນໄຂການນຳເຂົ້າຂອງ ສປປ ລາວ;

3) ໃນກໍລະນີຫາກໄດ້ຮັບອະນຸຍາດໃຫ້ນຳເຂົ້າຕ້ອງນຳເອົາຜ່ານດ່ານສາກົນທີ່ມີເຈົ້າໜ້າທີ່ກວດກາສັດຕະວະແພປະຈຳການເທົ່ານັ້ນ;

4) ນອກຈາກເອກະສານທີ່ກ່າວມາຂ້າງເທິງແລ້ວ, ການກວດກາຕົວຈິງໃຫ້ກວດກາ ດ້ານຈຳນວນ, ຄຸນລັກສະນະ ແລະ ຄຸນນະພາບ ຂອງສິນຄ້າ ໂດຍຕ້ອງໃຫ້ຖືກຕ້ອງ ຕາມເອກະສານ ອະນຸຍາດໃຫ້ນຳເຂົ້າເທົ່ານັ້ນ;

5) ມອບໃຫ້ເຈົ້າໜ້າທີ່ກວດກາສັດຕະວະແພດປະຈຳດ່ານສາກົນ ດຳເນີນການຕິດຕາມ ກວດກາໃຫ້ເຂັ້ມງວດ ເພື່ອເຝົ້າລະວັງ ແລະ ສະກັດກັ້ນຜູ້ລະເມີດ, ຝ່າຝືນ ນຳເຂົ້າ ຫຼື ລັກລອບນຳເຂົ້າລູກໝູ, ໝູຊີ້ນ, ຊີ້ນໝູ (ສົດ ແລະ ແຊ່ແຂງ) ແລະ ຊີ້ນສ່ວນຜະລິດຕະພັນສັດ ຖ້າພົບເຫັນໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງປະຕິບັດ ມາດຕະການ ກ່າວເຕືອນ, ປັບໃໝ ຫຼື ດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ ຕາມທີ່ກົດໝາຍ ແລະ ລະບຽບການກຳນົດ;

6) ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ສົມທົບກັບ ຂະແໜງອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ເປັນເຈົ້າການຊີ້ນຳ ແລະ ສົມທົບກັບ ບັນດາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອສະກັດກັ້ນບັນຫາດັ່ງກ່າວຢ່າງເຂັ້ມງວດ.

7) ໃນກໍລະນີ ທີ່ພົບເຫັນສັດເຈັບ ຫລື ຕາຍ ໂດຍບໍ່ຮູ້ສາຍເຫດ, ຕາຍເປັນຈຳນວນຫລາຍ ໃນເວລາໄລ່ເລັ່ຍກັນ ເຈົ້າຂອງສັດ ຕ້ອງຮີບຮ້ອນລາຍງານໃຫ້ສັດຕະວະແພດບ້ານ ຫລື ນາຍບ້ານ ຫລື ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ໂດຍດ່ວນ ເພື່ອລົງໄປຕິດຕາມກວດກາ ຂອບເຂດການເກີດພະຍາດຕົວຈິງ, ພ້ອມນັ້ນ, ຫ້າມນຳເອົາສັດ ທີ່ຕາຍ, ສັດເຈັບໄປບໍລິໂພກ ຫລື ເຄື່ອນຍ້າຍ ຊື້-ຂາຍຢ່າງເດັດຂາດ ໂດຍໃຫ້ຮີບຮ້ອນ ຝັງ ຫລື ເຜົາ ສັດທີ່ຕາຍນັ້ນທັນທີທັນໃດ ແລະ ຫ້າມນຳສັດທີ່ຕາຍຖິ້ມລົງຫວ້ຍ, ຮ່ອງ, ຄອງ, ບຶງ ແລະ ແມ່ນ້ຳຕ່າງໆ.

8) ເມື່ອໄດ້ຮັບແຈ້ງການສະບັບນີ້ແລ້ວ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ແຂວງ, ນະຄອນຫລວງ ຮີບຮ້ອນປະສານສົມທົບກັບ ດ່ານກວດກາສັດຕະວະແພດ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ເພື່ອຈັດຕັ້ງຜັນຂະຫຍາຍ ແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

ຫົວໜ້າກົມລ້ຽງສັດ ແລະ ການປະມົງ

ສົມພັນ ຈັນເພັງໄຊ

<u>ບ່ອນນຳສົ່ງ:</u>

| | | |
|---|---|---|
| 1. | ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ຫ້ອງການກະຊວງ ກປ | 1 ສະບັບ ເພື່ອຊ່ວຍຕິດຕາມການຈັດຕັ້ງປະຕິບັດ |
| 2. | ຫົວໜ້າຫ້ອງການກະຊວງ ກປ | 1 ສະບັບ ເພື່ອຊີ້ນຳການຈັດຕັ້ງປະຕິບັດ |
| 3. | ຫົວໜ້າ ພະແນກ, ສູນ ອອ້ມຂ້າງກົມ ກລປ | 1 ສະບັບ ເພື່ອຕິດຕາມການຈັດຕັ້ງປະຕິບັດ |
| 4. | ເກັບມ້ຽນ | 1 ສະບັບ |